ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ
--------===000===--------

ກຳມະບານຮາກຖານ ທະນາຄານແຫ່ງ ສປປ ລາວ
ໜ່ວຍກຳມະບານສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ

ເລກທີ 168 /ໜກບ.ສຄຄຊ
ນະຄອນຫຼວງວຽງຈັນ, ວັນທີ 27 ຕຸລາ 2018

# ຂໍ້ຕົກລົງ

## ວ່າດ້ວຍການແບ່ງຄວາມຮັບຜິດຊອບຂອງຄະນະໜ່ວຍ ແລະ ຜູ້ຊ່ວຍວຽກກຳມະບານ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ (ສຄຄຊ)

- ອີງຕາມຂໍ້ຕົກລົງວ່າດ້ວຍການຮັບຮອງເອົາຄະນະໜ່ວຍກຳມະບານ ສຄຄຊ ສະບັບເລກທີ 212/ກບຮຖ. ທຫລ, ລົງວັນທີ 12 ກຸມພາ 2014;
- ອີງຕາມຄວາມເປັນເອກະພາບຂອງຄະນະໜ່ວຍກຳມະບານ ສຳນັກງານ ຄຄຊ.

ຫົວໜ້າໜ່ວຍກຳມະບານ ສຄຄຊ ຕົກລົງ:

**ມາດຕາ 1** ການແບ່ງຄວາມຮັບຜິດຊອບຂອງຄະນະໜ່ວຍກຳມະບານ ສຄຄຊ.

1. ສ/ຫ ບຸນຈິງ ກອງຄຳ ຫົວໜ້າໜ່ວຍກຳມະບານ ສຄຄຊ
   1) ຮັບຜິດຊອບຊີ້ນຳ-ນຳພາຮອບດ້ານ ກ່ຽວກັບວຽກງານໜ່ວຍກຳມະບານ ສຄຄຊ;
   2) ຈັດການບັນຍາຍ ຫຼື ເຜີຍແຜ່ເອກະສານສຳຄັນ ທີ່ຕິດພັນວຽກງານກຳມະບານ (ຖ້າມີ);
   3) ຕາງໜ້າໜ່ວຍກຳມະບານເຂົ້າຮ່ວມປະຊຸມ ຫຼື ວຽກງານທີ່ຕິດພັນກັບກຳມະບານ ແລະ ການລາຍງານການເຄື່ອນໄຫວຂອງໜ່ວຍກຳມະບານໃນເວລາລວມກົມ ຫຼື ໃນໂອກາດທີ່ເປັນທາງການຕ່າງໆ;
   4) ຮັບຜິດຊອບວຽກງານຈັດຕັ້ງໜ່ວຍກຳມະບານ ເຊັ່ນ: ສະເໜີຮັບສະມາຊິກໃໝ່, ຍົກຍ້າຍ ແລະ ອື່ນໆ;
   5) ຮຽກປະຊຸມຄະນະໜ່ວຍກຳມະບານ ສຄຄຊ ຫຼື ສະມາຊິກໜ່ວຍກຳມະບານ ສຄຄຊ ໃນແຕ່ລະເດືອນ ກໍລະນີທີ່ອົງການຈັດຕັ້ງຊາວໜຸ່ມ ແລະ ອົງການຈັດຕັ້ງແມ່ຍິງ ແຍກປະຊຸມຕ່າງຫາກ;
   6) ເປັນປະທານກອງປະຊຸມ 3 ອົງການຈັດຕັ້ງມະຫາຊົນຂອງ ສຄຄຊ ຕາມວາລະການໝູນວຽນກັນເປັນປະທານຂອງ 3 ອົງການຈັດຕັ້ງມະຫາຊົນ;
   7) ເປັນຜູ້ປະສານງານກັບພາກສ່ວນພາຍນອກ ຕິດພັນກັບວຽກງານກຳມະບານ;

8) ຮັບຜິດຊອບຊີ້ນຳວຽກງານເອກະສານຂາເຂົ້າ-ຂາອອກ, ສະຖິຕິ ແລະ ສະຫຼຸບສັງລວມການເຄື່ອນໄຫວວຽກງານຂອງໜ່ວຍກຳມະບານປະຈຳເດືອນ ແລະ ອື່ນໆ ໂດຍມີຜູ້ຊ່ວຍວຽກແມ່ນ ສ/ຫ ແສງອາລຸນ ວິໄລສານ.

2. **ສ/ຫ ບົວລຳພູ ຄຳມະນີວົງ** ຮອງຫົວໜ້າໜ່ວຍກຳມະບານ ສຄຄຊ

1) ຮັບຜິດຊອບນຳພາວຽກຂະບວນການຂອງໜ່ວຍກຳມະບານ ເປັນຕົ້ນແມ່ນການຄັດເລືອກເປົ້າໝາຍເຂົ້າຮ່ວມອຸປະຖຳເຮືອນດີ-ເຮືອນກຳ, ບໍລິຈາກເລືອດ, ອອກແຮງງານອະນາໄມ, ຍ່າງເພື່ອສຸຂະພາບ ແລະ ຂະບວນການອື່ນໆຕາມແຈ້ງການກ່ຽວຂ້ອງ;

2) ເກັບກຳລາຍຊື່ຜູ້ສະໝັກເຂົ້າຮ່ວມຂະບວນການທີ່ກ່ຽວຂ້ອງ ພ້ອມທັງແຈ້ງໃຫ້ສະມາຊິກກ່ຽວຂ້ອງເຂົ້າຮ່ວມຂະບວນການ;

3) ຮ່າງໜັງສືແຈ້ງຕອບຮາກຖານກຳມະບານ ທຫລ ກ່ຽວກັບລາຍຊື່ຜູ້ເຂົ້າຮ່ວມຂະບວນການ ໂດຍຜ່ານຫົວໜ້າໜ່ວຍກຳມະບານ;

4) ປະຕິບັດວຽກງານກຳມະບານ ຕາມການມອບໝາຍຂອງຫົວໜ້າໜ່ວຍກຳມະບານ ສຄຄຊ;

5) ນຳພາການເຂົ້າຮ່ວມຂະບວນການ ພ້ອມທັງເກັບກຳລາຍເຊັນຜູ້ເຂົ້າຮ່ວມຕົວຈິງ ແລ້ວນຳສົ່ງລາຍຊື່ສະມາຊິກທີ່ເຂົ້າຮ່ວມຂະບວນການຕົວຈິງ ໃຫ້ຜູ້ຮັບຜິດຊອບວຽກງານສະຖິຕິ ໂດຍມີຜູ້ຊ່ວຍວຽກແມ່ນ ສ/ຫ ອານຸສອນ ບຸນຍາວົງ.

3. **ສ/ຫ ວິລະເດດ ທອງວັນຄຳ** ຮອງຫົວໜ້າໜ່ວຍກຳມະບານ ສຄຄຊ

1) ຮັບຜິດຊອບນຳພາວຽກງານກວດກາ ເປັນຕົ້ນແມ່ນ: ກວດກາການປະຕິບັດໜ້າທີ່ ແລະ ປະຕິບັດລະບຽບກຳມະບານ ລວມເຖິງການປະເມີນສະມາຊິກກຳມະບານ ສຄຄຊ ເປັນແຕ່ລະໄລຍະ ຕາມແຈ້ງການຂອງກຳມະບານຮາກຖານ ທຫລ;

2) ວຽກນະໂຍບາຍຕ່າງໆທີ່ກ່ຽວຂ້ອງກັບກຳມະບານຕໍ່ສະມາຊິກ ເປັນຕົ້ນ: ເງິນອຸດໜູນພະນັກງານ/ຄອບຄົວພະນັກງານເກີດລູກ, ເງິນກິນທານຄອບຄົວພະນັກງານເສຍຊີວິດ ແລະ ອື່ນໆ;

3) ປົກປ້ອງສິດຜົນປະໂຫຍດຂອງສະມາຊິກກຳມະບານ ສຄຄຊ;

4) ປະຕິບັດວຽກງານຕາມສິດ ແລະ ໜ້າທີ່ຕາມທີ່ໄດ້ກຳນົດໄວ້ໃນຂໍ້ຕົກລົງວ່າດ້ວຍ ຄັງເງິນຂອງສຄຄຊ;

5) ເຮັດບົດບັນທຶກກອງປະຊຸມຕ່າງໆ ພ້ອມດ້ວຍໃບລົງທະບຽນ ທີ່ຕິດພັນກັບວຽກຂອງໜ່ວຍກຳມະບານ ສຄຄຊ;

6) ປະຕິບັດວຽກງານກຳມະບານ ຕາມການມອບໝາຍຂອງຫົວໜ້າໜ່ວຍກຳມະບານ ສຄຄຊ;

7) ຮັບຜິດຊອບການເບິ່ງແຍງຊີວິດຄວາມເປັນຢູ່ ແລະ ອຸປະຖຳຈິດໃຈສະມາຊິກເວລາເຈັບປ່ວຍຕ່າງໆ ໂດຍມີຜູ້ຊ່ວຍວຽກແມ່ນ ສ/ຫ ນາງ ປະກາຍແກ້ວ ວຽງວິໄລ.

**ມາດຕາ 2** ການຈັດຕັ້ງປະຕິບັດ.

ຄະນະໜ່ວຍກຳມະບານ ສຄຄຊ ພ້ອມດ້ວຍສະມາຊິກ ຈົ່ງຮັບຮູ້ ແລະ ປະຕິບັດຕາມຂໍ້ຕົກລົງສະບັບນີ້.

**ມາດຕາ 3** ຜົນສັກສິດ.

ຂໍ້ຕົກລົງສະບັບນີ້ ໃຊ້ປ່ຽນແທນ ຂໍ້ຕົກລົງສະບັບເລກທີ 037/ໜກບ.ສຄຄຊ ລົງວັນທີ 20 ກຸມພາ 2014 ແລະ ມີຜົນສັກສິດ ນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ.

**ຫົວໜ້າໜ່ວຍກຳມະບານ ສຄຄຊ**

ບຸນຈິງ ກອງຄຳ